## ການບ້ານບົດທີ 5 ພາກຕົ້ນ

# ເດີນທາງໄປເຢລູຊາເລັມ

(ກິດຈະການ 20:3-38)

## ແວ່ຢູ່ຟີລິບປອຍ

(ກິດຈະການ 20:3-6)

**1** ກ. ເທື່ອສຸດທ້າຍນີ້ ໂປໂລພັກຢູ່ໂກລິນໂທຈັກເດືອນ? (ກຈກ 20:3) ________________

ຂ. ຫຼັງຈາກຂຽນຈົດໝາຍໄປເຖິງຄຣິດສະຕະຈັກໃນກຸງໂລມແລ້ວ ໂປໂລຕັ້ງໃຈຈະກັບໄປເຖິງຄຣິດສະຕະຈັກທີ່ໃຊ້ເພິ່ນ ອອກໄປປະກາດຂ່າວປະເສີດຄືອັນຕີໂອເຂຍ ແຂວງໃດ? _______

**2** ແຕ່ບໍ່ໄດ້ໄປ!

ກ. ໂປໂລຈວນຈະລົງເຮືອ ມີພວກໃດທີ່ຄິດປອງຮ້າຍໃສ່ເພິ່ນ? (ກຈກ 20:3) __________

ຂ. ເມື່ອໂປໂລຮູ້ເລື່ອງອຸບາຍເລ້ຫຼ່ຽມນັ້ນ ເພິ່ນປ່ຽນໃຈວ່າຈະໄປແຂວງໃດ? ___________

ຄ. ໄປຮອດແຂວງນັ້ນແລ້ວ ເພິ່ນແວ່ໄປໃນເມືອງທີ່ມີພີ່ນ້ອງຄຣິດສະຕຽນ ຄືເມືອງໃດ? (ກຈກ 20:6) ________________________________________________

**3** ເມື່ອໂປໂລອອກເດີນທາງໄປ ມີພີ່ນ້ອງຈາກຫຼາຍບ່ອນໄປນຳ. ເຂົາອາດຈະໄປເປັນເພື່ອນເດີນທາງກັບໂປໂລ ຫຼືອາດຈະ ແມ່ນວ່າເຂົາເປັນຜູ້ຕາງໜ້າຄຣິດສະຕະຈັກຕ່າງ ໆ ທີ່ຈະເອົາຄວາມຊ່ວຍເຫຼືອໄປເຢລູຊາເລັມ. ເຫັນລາຍຊື່ເຂົາໃນ ກິດຈະການ 20:4.

ກ. ໂຊປາໂທ ຈາກຄຣິສະຕະຈັກໃດ ໃນແຂວງມາເກໂດເນຍ? ____________________

ຂ. ອາລິດຕາໂຂກັບຊະກຸນໂດ ຈາກຄຣິດສະຕະຈັກໃດ ໃນແຂວງມາເກໂດເນຍ? ________

ຄ. ຄາໂຍ ຈາກຄຣິດສະຕະຈັກໃດ ໃນແຂວງຄາລາເຕຍ? ________________________

ງ. ຕີຂີໂກກັບໂທຟີໂມ ຈາກຄຣິດສະຕະຈັກເອເຟໂຊ ໃນແຂວງໃດ? ________________

ຈ. ອີກຄົນໜຶ່ງທີ່ມາຮ່ວມກັບໂປໂລໃນເມືອງລີຊະທາແຂວງຄາລາເຕຍ. ທ່ານຮຽນຮູ້ເລື່ອງຄົນນີ້ແລ້ວ ໃນການບ້ານ ບົດທີ 1 ພາກຕົ້ນ. ຄືໃຜ? ____________________________

**4** ທຸກແຂວງທີ່ໂປໂລໄປປະກາດຂ່າວປະເສີດແລະຕັ້ງຄຣິດສະຕະຈັກຖ່າມກາງຄົນຕ່າງຊາດ ມີຜູ້ຕາງໜ້າຫຼາຍຄຣິດສະຕະ ຈັກທີ່ເດີນທາງກັບໂປໂລ ຂາດແຕ່ຄຣິດສະຕະຈັກໃນແຂວງດຽວ ຄືແຂວງໃດ? ______________________________________________________

*ເຖິງໂປໂລເຕືອນໃຈເຂົາໄວ້ເລື່ອງການສົງເຄາະນັ້ນ ໃນ 2 ກລທ 9:1-3 ເຂົາອາດຈະຊ້າ, ແຕ່ບາງທີ ບໍ່ພ້ອມເທື່ອ ຈຶ່ງບໍ່ມີຜູ້ຕາງໜ້າໄປກັບໝູ່.*

**5** ສ່ວນພວກທ່ານທີ່ຮຽນຫຼັກສູດໂປໂລທີສອງມາກ່ອນນັ້ນ. ອາດຈະຈື່ໄວ້ວ່າ ເມື່ອໂປໂລອອກໄປປະກາດເທື່ອທີສອງ ລູກາໄປກັບໂປໂລເຖິງຟີລິບປອຍ ແຕ່ເມື່ອໂປໂລເດີນທາງໄປເທຊະໂລນິກ ລູກາບໍ່ໄດ້ໄປ. ລູກາຢູ່ປະຈຳໃນຟີລິບປອຍ ເພື່ອສອນຄຣິດສະຕຽນໃໝ່. ເລື່ອງນີ້ເຮົາສັງເກດໄດ້ເພາະມາເຖິງຟີລິບປອຍ ລູກາທີ່ເປັນຜູ້ລາຍງານເຄີຍໃຊ້ຄຳວ່າ "ພວກເຮົາ" ຢູ່ສະເໝີ. ຫຼັງຈາກລູກາບໍ່ໄດ້ຢູ່ກັບເຂົາເພິ່ນໃຊ້ແຕ່ຄຳວ່າ "ເຂົາ".

ກ. ໃນ ກຈກ 20:6 ເຫັນຄຳວ່າ "ພວກເຮົາ" ຫຼື "ເຂົາ"? ____________________________

ຂ. ສະແດງວ່າ ຕັ້ງແຕ່ໂປໂລເດີນທາງຈາກຟີລິບປອຍໄປ ແມ່ນຜູ້ໃດກັບມາຮ່ວມກັບໂປໂລອີກ? ______________________________________

**6** ເຂົາໄປບ່ອນໃດກໍຕາມ ພະວິນຍານໃຊ້ຄົນມາເຕືອນເລື່ອງຄວາມລຳບາກທີ່ຈະມີຕໍ່ໄປ.

ກ. ພະວິຍານຜູກພັນໂປໂລເລື່ອງການໄປໃສ? (ກຈກ 20:22-23) __________________

ຂ. ແຕ່ໂປໂລຖືຢ່າງໃດກ່ຽວກັບຊີວິດ? (ກຈກ 20:24) _____________________________

ຄ. ແຕ່ຈະປະຕິບັດຫຍັງໃຫ້ສຳເລັດ? ________________________________________

**7** ກ. ໂປໂລໃຊ້ຄົນລ່ວງໜ້າໄປເມືອງໃດ? (ກຈກ 20:5) ________________________

ຂ. ແຕ່ສ່ວນໂປໂລເອງເພິ່ນຢູ່ຟີລິບປອຍຈົນວັນເທດສະການເຂົ້າຈີ່ບໍ່ມີເຊື້ອລ່ວງໄປແລ້ວ. ເຂົາເດີນທາງໂດຍທາງບົກ ໄປເຖິງເມືອງເນອາໂປລີ ຊຶ່ງເປັນທ່າເຮືອຢູ່ໃກ້ກັບຟີລິບປອຍ, ເທື່ອທີ່ເຂົາໄປ 6 ປີກ່ອນ (ກຈກ 16:11) ເຂົາຂ້າມໄປຟາກນັ້ນໃນສອງວັນ ແຕ່ເທື່ອນີ້ໄດ້ຈັກວັນຈຶ່ງຈະເຖິງເມືອງໂທອາດ? (ກຈກ 20:6) ____________________________________

ຄ. ເບິ່ງຄືມີຫຼາຍຢ່າງຕໍ່ຕ້ານການໄປເຢລູຊາເລັມ. ພີ່ນ້ອງຄຣິດສະຕຽນເຕືອນເລື່ອງຄວາມລຳບາກ ເຮືອແລ່ນຕ້ານ ລົມ ແຕ່ເປັນຢ່າງໃດກໍຕາມເຮືອໄດ້ມາເຖິງເມືອງໃດ? (ກຈກ 20:6) ______________________________________________________

## ຄຣິດສະຕະຈັກໃນເມືອງໂທອາດ

(ກິດຈະການ 20:7-12)

**8** ໂປໂລຕັ້ງຄຣິດສະຕະຈັກໄວ້ຫຼາຍບ່ອນ ແຕ່ຄຣິດສະຕະຈັກໃນເມືອງໂທອາດບໍ່ມີຊື່ສຽງ ເຖິງຈະບໍ່ມີຊື່ສຽງຫຼາຍກໍຕາມ ແຕ່ເບິ່ງຍັງມີຈຸດສຳຄັນ 5 ປະການໃນຄຣິດສະຕະຈັກນັ້ນ.
ໂປໂລໄປເມືອງໂທອາດ 3 ຫຼື 4 ເທື່ອ.

### ໄປໂທອາດທຳອິດໃນເວລາອອກໄປປະກາດເທື່ອທີສອງ

ໃຫ້ອ່ານ ກຈກ 16:8-9.

ກ. ໃນຂໍ້ 8 ເບິ່ງຄືຜູ້ລາຍງານບໍ່ໄດ້ຢູ່ກັບໂປໂລ, ໃນຂໍ້ 10 ເຫັນມີຄຳວ່າ "ພວກເຮົາ" ຫຼືບໍ່? ___

ຂ. ສະແດງວ່າ ຕັ້ງແຕ່ຂໍ້ 10 ເປັນຕົ້ນໄປ, ແມ່ນໃຜເດີນທາງນຳໂປໂລຈາກເມືອງໂທອາດໄປ?

______________________________________________________________

ຄ. ໃນເມືອງໂທອາດໂປໂລເຫັນການນິມິດ ມີຊາຍຊາວໃດ ອ້ອນວອນໃຫ້ໂປໂລມາຊ່ວຍ? (ກຈກ 16:9) ______________________________________________________

**ໂປໂລເດີນທາງໄປປະກາດພະທຳໃນທະວີບຢູໂລບ (ແຂວງມາເກໂດເນຍ).**

ໄປໂທອາດຄັ້ງທີສອງ ເມື່ອອອກໄປປະກາດເທື່ອທີສາມ. ໃຫ້ອ່ານ 2 ກລທ 2:12-13. ແລ້ວກັບໄປທວນຄືນບົດທີສາມຕົ້ນຄຳຖາມ 15 ແລະ 16 ໜ້າ 43.

ງ. ໂປໂລແວ່ທີ່ໂທອາດ ເວລາເດີນທາງຈາກເອເຟໂຊໄປເຖິງຟີລິບປອຍ. ເພິ່ນລໍຖ້າໃຜຈະເອົາຂ່າວມາຈາກຄຼິດສະ ຕະຈັກໂກລິນໂທ? ________________________________

ຈ. ໃນເມື່ອໂປໂລລໍຖ້າຕີໂຕໃນເມືອງໂທອາດນັ້ນ ເພິ່ນປະກາດຂ່າວປະເສີດເຫັນວ່າພະເຈົ້າໄຂຫຍັງແກ່ເພິ່ນ? (2 ກລທ 2:12) ____________________________________

ສ. ໂປໂລຂອບພະຄຸນພະເຈົ້າທີ່ໃຫ້ໄຊຊະນະ ແລະໃຫ້ມີກິ່ນຫອມຂອງຄວາມຮູ້ຈັກພະອົງໃນບ່ອນໃດ? (2 ກລທ 2:14) ______________________________________

**ໄປໂທອາດຄັ້ງທີສາມ (ເມື່ອໄປປະກາດເທື່ອທີສາມ).**

ໃຫ້ອ່ານ ກຈກ 20:6-12. ໂປໂລໄປຫາເຂົາອີກ ແລ້ວເຫັນວ່າຄຼິດສະຕະຈັກກ້າວໜ້າຫຼາຍ. ເຂົາປະຊຸມໃນຫ້ອງຊັ້ນເທິງ ມີຄົນເຕັມຫ້ອງຈົນ ວ່າບໍ່ມີບ່ອນນັ່ງ.

ຊ. ມີຊາຍໜຸ່ມຊື່ຢູຕີໂຊ ນັ່ງຢູ່ໃສ? ____________________________________

ຍ. ເຂົາສົນທະນາກັນຈົນເຖິງເວລາໃດ? (ຂໍ້ 11) __________________________

ດ. ເຂົາເຮັດພິທີໃດຮ່ວມກັນ? (ຂໍ້ 7 ແລະ 11) ___________________________

ຕ. ໂປໂລຢູ່ກັບເຂົາຈັກວັນ? (ຂໍ້ 6) _____________________________________

ຖ. ພວກເຂົາຈື່ເລື່ອງນີ້ໄດ້ດີ ເພາະເຫດອັດສະຈັນໃດ? (ຂໍ້ 9-12) _______________

*ອາດຈະມີອີກເທື່ອໜຶ່ງທີ່ໂປໂລແວ່ໄປໂທອາດ ເພາະອີກຫຼາຍປີກ່ອນໂປໂລຈະຕາຍ ເພິ່ນຂໍໃຫ້ຕີໂມທຽວເອົາ ເສື້ອຄຸມທີ່ປະໄວ້ໃນເມືອງໂທອາດ (2 ຕີໂມທຽວ 4:13).*

ຈາກນັ້ນອີກຮ້ອຍປີ ມີນັກປະຫວັດສາດລາຍງານວ່າຄຼິດສະຕະຈັກໃນເມືອງໂທອາດຍັງໝັ້ນຄົງຢູ່.

**9** ມີຢ່າງນ້ອຍ 3 ເທື່ອທີ່ໂປໂລໄປເຖິງເມືອງໂທອາດດັ່ງຕໍ່ໄປນີ້:



ກ. ຮູບໃດ ສະແດງເຖິງຄັ້ງທຳອິດທີ່ໂປໂລໄປໂທອາດ? ____________________________

ຂ. ຮູບໃດ ສະແດງເຖິງຄັ້ງທີສອງ? ____________________________________________

ຄ. ຮູບໃດ ສະແດງເຖິງຄັ້ງທີສາມ? ____________________________________________

# ໂປໂລເດີນທາງຈາກໂທອາດໄປມີເລໂຕ

**10** ໃຫ້ອ່ານ ກຈກ 20:13-17.

ກ. ໂປໂລຢາກໄປເຖິງເຢລູຊາເລັມກ່ອນວັນໃດ? (ກຈກ 20:16) ____________________

ຂ. ຕັ້ງໃຈວ່າຈະກາຍເມືອງໃດ ເພື່ອບໍ່ໃຫ້ຄ້າງຢູ່ດົນ? ______________________________

ຄ. ຜູ້ອື່ນໄປທາງເຮືອແຕ່ໂປໂລຍ່າງໄປ 48 ຫຼັກ, ຈາກໂທອາດທີ່ໝາຍໄວ້ໃນແຜນທີ່ໂດຍເລກໃດ? ____________________________________________

ງ. ຍ່າງໄປເຖິງທ່າເຮືອຕໍ່ໄປ ຄືເມືອງໃດ? (ກຈກ 20:14) _________________________

ຈ. ເມືອງນັ້ນ ໝາຍໄວ້ໂດຍເລກໃດ? ________________________________________

ສ. ທຳມະດາໂປໂລບໍ່ເດີນທາງໄປຜູ້ດຽວ ແຕ່ເຫັນວ່າເພິ່ນອາດຈະຢາກຫາໂອກາດເດີນທາງ ແລະອະທິຖານໄປພ້ອມ. ພະວິນຍານເຕືອນໂປໂລມາຫຼາຍເທື່ອວ່າຈະມີເຄື່ອງຜູກມັດ ແລະຄວາມທຸກລຳບາກ, ແຕ່ເພິ່ນຖືວ່າຈະຕ້ອງຂຶ້ນໄປ ກຸງໃດ? (ກຈກ 20:22-23) ________




**11** ເຮືອນັ້ນແວ່ຢູ່ເກາະສາມເກາະ. (ຕາມໃນ ກຈກ 20:15)

ກ. ແວ່ເມືອງໃດກ່ອນ? ________________________________________________

ຂ. ໝາຍໄວ້ໂດຍເລກໃດ? ______________________________________________

ຄ. ອີກວັນໜຶ່ງ ຄືເກາະໃດ? ____________________________________________

ງ. ໝາຍໄວ້ໂດຍຕົວເລກໃດ? ___________________________________________

ຈ. ວັນທີສອງເຖິງເກາະໃດ? ____________________________________________

ສ. ໝາຍໂດຍເລກໃດ? _______________________________________________

ຂ. ຕໍ່ຈາກນັ້ນອີກວັນໜຶ່ງເຖິງເມືອງໃດ? ______________________________
ຍ. ໝາຍໂດຍເລກໃດ? ______________________________
ດ. ເຮືອຜ່ານເມືອງໃດ? ______________________________
ຕ. ໝາຍໂດຍເລກໃດ? ______________________________

**12** ກ. ໂປໂລໃຊ້ຄົນຈາກເມືອງມີເລໂຕໄປໃສ? (ກຈກ 20:17) ____________________
ຂ. ເຊີນເອົາໃຜມາ? ______________________________

## ໂປໂລກ່າວຄຳປາໃສຕໍ່ພວກເຖົ້າແກ່ຈາກເອເຟໂຊ

**13** ໂປໂລອ້າງເຖິງອາດີດ ທັງປະຈຸບັນ ແລະ ອະນາຄົດ.

- ອາດີດ ໃນ ກຈກ 20:17-21 ແລະ 20:33-35 ແລະເບິ່ງຮູບໜ້າ 9-10.
- ປະຈຸບັນ ໃນ ກຈກ 20:22-25.

ກ. ໂປໂລຮູ້ໄວ້ກ່ອນແລ້ວວ່າ ຈະຖືກຄຸກແລະຈະໄດ້ຮັບຄວາມລຳບາກໃນກຸງໃດ? ________

- ອະນາຄົດ ໃນ ກຈກ 20:26-32.

ຂ. ໂປໂລເຕືອນເຂົາໄວ້ວ່າ ຈະມີຜູ້ສອນບໍ່ຈິງມາກວນເຂົາເໝືອນຢ່າງໃດ? ____________

*ຈົ່ງຮັບພິຈາລະນາ*

*ໃຫ້ທ່ານອ່ານເມື່ອ ໂປໂລກ່າວຄຳປາໃສເປັນເທື່ອສຸດທ້າຍຕໍ່ພວກເຖົ້າແກ່ຈາກເມືອງເອເຟໂຊ ໃນ ກຈກ 20:17-38 ແລະໃຫ້ສັງເກດຈຸດໃດທີ່ຈະເປັນຜົນປະໂຫຍດໃນຊີວິດຂອງທ່ານ ທີ່ຈະຮັບໃຊ້ພະເຈົ້າ.*

**14** ເຮືອຂອງໂປໂລຈວນຈະເດີນທາງໄປ, ໂປໂລອ້ອນວອນເພື່ອເຂົາ ພວກເຂົາອາດຈະທຸກໃຈເພາະໂປໂລບອກວ່າຈະບໍ່ ເຫັນໜ້າກັນອີກ. ແລ້ວເຂົາໄດ້ພາກັນໄປສົ່ງທ່ານທີ່ທ່າເຮືອ. ເຂົາພາກັນເປັນຫຍັງ? (ກຈກ 20:37) ______________________________

| ຕອບ: |
|---|

**1** *ກ. 3 ເດືອນ. ຂ. ຊີເລຍ.*

**2** *ກ. ພວກຢິວ. ຂ. ມາເກໂດເນຍ. ຄ. ຟີລິບປອຍ.*

**3** *ກ. ເບຣອຍອາ. ຂ. ເທຊະໂລນິກ. ຄ. ເດລະເບ. ງ. ອາເຊຍ.*
*ຈ. ຕີໂມທຽວ.*

**4** *ອະຊາຢາ.*

**5** *ກ. ພວກເຮົາ. ຂ. ລູກາ.*

**6** *ກ. ເຢລູຊາເລັມ. ຂ. ບໍ່ຖືວ່າເປັນຂອງມີຄ່າ.*
*ຄ. ງານທີ່ໄດ້ຮັບມອບໝາຍຈາກອົງພະຜູ້ເປັນເຈົ້າ.*

**7** *ກ. ເມືອງໂທອາດ. ຂ. ໄດ້ 5 ວັນ. ຄ. ໂທອາດ.*

**8** *ກ. ມີ. ຂ. ລູກາ. ຄ. ມາເກໂດເນຍ. ງ. ຕີໂຕ. ຈ. ໄຂຊ່ອງທາງ.*
*ສ. ທຸກບ່ອນ. ຊ. ນັ່ງຢູ່ປ່ອງຢ້ຽມ. ຍ. ເຖິງຮຸ່ງເຊົ້າ. ດ. ຫັກເຂົ້າຈີ່.*
*ຕ. ຢູ່ 7 ວັນ. ຖ. ຢູ່ຕີໂຂຄືນຈາກຕາຍ.*

**9** *ກ. ຮູບຂ້າງຊ້າຍ. ຂ. ຮູບກາງ. ຄ. ຮູບຂວາ.*

**10** *ກ. ວັນເທດສະການເພັນເຕຄໍສະເຕ. ຂ. ເອເຟໂຊ. ຄ. ໝາຍເລກ 1.*
*ງ. ອາໂຊ. ຈ. ເລກ 2. ສ. ເຢລູຊາເລັມ.*

**11** *ກ. ມີເຕເລເນ. ຂ. ເລກ 3. ຄ. ຂີໂອ. ງ. ເລກ 4. ຈ. ຊາໂມ. ສ. ເລກ 5.*
*ຊ. ມີເລໂຕ. ຍ. ເລກ 6. ດ. ເອເຟໂຊ. ຕ. ເລກ 7.*

**12** *ກ. ເອເຟໂຊ. ຂ. ພວກເຖົ້າແກ່ໃນຄຣິດສະຕະຈັກມາ.*

**13** *ກ. ເຢລູຊາເລັມ. ຂ. ໝາໄນຕົວຮ້າຍ.*

**14** *ຮ້ອງໃຫ້.*

**ການບ້ານບົດທີ 5 ພາກປາຍ**

# ໂປໂລຖືກຈັບໃນເຢລູຊາເລັມ

(ກິດຈະການ 21:1-23)




## ໂປໂລເດີນທາງຈາກມີເລໂຕໄປເຢລູຊາເລັມ

(ກຈກ 21:1-19)

**1** ໃຫ້ອ່ານ ກຈກ 21:1-2. ເຮືອຜ່ານເກາະສອງເກາະ.

ກ. ໄປເກາະໃດກ່ອນ ຕາມໃນແຜນທີ່? ____________________

ຂ. ໝາຍໄວ້ໃນແຜນທີ່ໂດຍຕົວເລກໃດ? ____________________

ຄ. ອີກວັນໜຶ່ງມາເຖິງເກາະໃດ? ____________________

ງ. ໝາຍໄວ້ໂດຍຕົວເລກໃດ? ____________________

ຈ. ສຸດທ້າຍມາເຖິງແຜ່ນດິນໃຫຍ່ ຄືເມືອງໃດ? ____________________

ສ. ໝາຍໄວ້ໂດຍຕົວເລກໃດ? ____________________

*ເຂົາເຫັນເຮືອອີກລຳໜຶ່ງທີ່ຈະຂ້າມທະເລເມດີແຕລາເນໄປຟອຍນີເກ.*

**2** ໃຫ້ອ່ານ ກຈກ 21:3-6

ກ. ເຮືອເວັ້ນເກາະໃດ? ____________________

ຂ. ໝາຍໄວ້ໂດຍຕົວເລກໃດ? ____________________

*ເມື່ອໂປໂລອອກໄປປະກາດເທື່ອທຳອິດ ເພິ່ນແວ່ຢູ່ເກາະກຸບໂລ.*

**3** ກ. ເຂົາລົງຈາກເຮືອນັ້ນໃນເມືອງໃດ? ____________________

ຂ. ໝາຍໄວ້ໂດຍຕົວເລກໃດ? ____________________

ຄ. ໃນ 7 ວັນທີ່ເຮືອຈອດນັ້ນເຂົາພົບພວກສິດ, ສິດເຫຼົ່ານັ້ນບອກໂປໂລວ່າ ພະວິນຍານ ບໍ່ໃຫ້ຂຶ້ນໄປໃສ? ____________________

**4** ໃຫ້ອ່ານ ກຈກ 21:7.

ກ. ຫຼັງຈາກນັ້ນເຂົາມາເຖິງເມືອງໃດ? ____________________

ຂ. ໝາຍໄວ້ໂດຍຕົວເລກໃດ? ____________________

ຄ. ພັກຢູ່ກັບພີ່ນ້ອງຈັກວັນ? ____________________

**5** ໃຫ້ອ່ານ ກຈກ 21:8-14.

ກ. ເຂົາຂຶ້ນບົກໄປເມືອງໃດ? ____________________

ຂ. ໝາຍໄວ້ໂດຍຕົວເລກໃດ? ____________________

ຄ. ເຂົ້າໄປໃນເຮືອນຂອງໃຜ? ____________________

ງ. ຟີລິບ ນັ້ນ ມີລູກສາວຈັກຄົນທີ່ເປັນຜູ້ປະກາດພະທຳ? ____________________

ຈ. ມີຜູ້ທຳນວາຍລົງມາຈາກແຂວງຢູດາ ຊື່ຫຍັງ? ____________________

ສ. ອາຄາໂບ ນັ້ນ ເອົາຫຍັງມັດຕີນມັດມືຂອງຕົນ? ____________________

ຊ. ໂປໂລຕອບວ່າເຮົາເຕັມໃຈພ້ອມທີ່ຈະໃຫ້ເຂົາມັດໄດ້ ແລະພ້ອມຈະຕາຍຢູ່ກຸງໃດ? ____

## ໃນກຸງເຢລູຊາເລັມ

(ອ່ານ ກິດຈະການ 21:17-26)

**6** ກ. ຫຼາຍເດືອນຕໍ່ມາ ໂປໂລພ້ອມທີ່ຈະເອົາຫຍັງມາໃຫ້ພີ່ນ້ອງທີ່ທຸກຍາກໃນກຸງເຢລູຊາເລັມ? (ໂລມ 15:26) ____________________

ຂ. ພີ່ນ້ອງໃນກຸງເຢລູຊາເລັມ ຕ້ອນຮັບໂປໂລຢ່າງໃດ? (ກຈກ 21:17) ____________________

ຄ. ມື້ໜ້າມາພວກເຂົາເຂົ້າໄປຫາໃຜ? (ກຈກ 21:18) ____________________

ງ. ໂປໂລກັບໝູ່ກ່າວເຖິງການຂອງພະເຈົ້າໃນໝູ່ຄົນຊາດໃດ? (ກຈກ 21:19) ____________________

**7** ເຖິງວ່າ ເຂົາສະແດງທ່າທີຕ້ອນຮັບໂປໂລດ້ວຍຄວາມຍິນດີກໍຕາມ ແລະເຂົາດີໃຈທີ່ໄດ້ຮັບການຊ່ວຍເຫຼືອຈາກ ຄຼິດສະຕຽນຄົນຕ່າງຊາດ ແຕ່ເຂົາບໍ່ຄືນດີກັບຄຼິດສະຕຽນຕ່າງຊາດໂດຍເຕັມໃຈ. ຄຼິດສະຕຽນຊາດຢິວຫຼາຍ ຄົນບໍ່ພໍ່ໃຈກັບໂປໂລ, ເຂົາຫາວ່າ ໂປໂລບໍ່ຖືພະບັນຍັດຂອງໂມເຊ. ຢາໂກໂບແລະໝູ່ຊັກຊວນໃຫ້ໂປໂລເຂົ້າ ຮ່ວມກັບ 4 ຄົນ ທີ່ຈະຊຳລະຕົວຕາມພິທີສາດສະໜາຢິວໃນພະວິຫານ. ໂປໂລຍອມເຂົາໃນເລື່ອງນັ້ນ.

ກ. ໂປໂລເຮັດພິທີໃດ? ____________________

ຂ. ເຮັດຢູ່ໃສ? ____________________

ຄ. ເຮັດກັບໃຜ? ____________________

ຢາໂກໂບບອກວ່າ ຖ້າເຮັດຢ່າງນັ້ນ ຜູ້ທີ່ຈະປອງຮ້າຍຈະບໍ່ມີເຫດໃຫ້ຕິຕຽນໂປໂລໄດ້. ໂປໂລບໍ່ຢາກຜິດກັບພີ່ນ້ອງ ຊຶ່ງສະຕຽນຊາດຍິວເພິ່ນຈຶ່ງເອົາໃຈເຂົາ.

ງ. ແມ່ນໃຜທີ່ເຕືອນໂປໂລໄວ້ກ່ອນ? (ກຈກ 21:4) ____________________________

*ແຕ່ແທນທີ່ຈະແກ້ບັນຫາໂດຍເອົາໃຈເຂົາ ບັນຫາຍິ່ງລຸກລາມຂຶ້ນອີກ!*

## ຄົນຍິວຕັ້ງໃຈຈະຂ້າໂປໂລ

(ກຈກ 21:21-36)

**8** ກ. ຄົນຍິວທີ່ເຫັນໂປໂລໃນບໍລິເວນພະວິຫານ ມາຈາກແຂວງໃດ? (ກຈກ 21:27) ________

ຂ. ເຂົາເຫັນໂປໂລກັບໃຜໃນເມືອງ? (ກຈກ 21:29) ____________________________

ຄ. ເປັນຊຶ່ງສະຕຽນຈາກແຂວງໃດ? ______________________________________

ງ. ເຂົາຄິດຜິດວ່າ ໂປໂລເອົາໂທຟີໂມນັ້ນເຂົ້າໄປໃນພະວິຫານ ດັ່ງນັ້ນເຂົາຍົວະຍົງປະຊາຊົນລົງມືຈັບໃຜ? (ກຈກ 21:27) ________________________________________

ຈ. ເກີດມີການວຸ້ນວາຍຈົນເຖິງຜູ້ໃດໄປຊ່ວຍຊີວິດໂປໂລ? (ກຈກ 21:31-32) __________

ສ. ເພື່ອຮັກສາຄວາມປອດໄພ ນາຍພັນນັ້ນເອົາໂປໂລໄປໃສ? (ກຈກ 21:34) __________

**9** ກ່ອນຈະຂຶ້ນຂັ້ນໄດເຂົ້າຕຶກຂອງທະຫານ, ໂປໂລຂໍອະນຸຍາດກ່າວຄຳປາໄສໃຫ້ເຂົາຟັງ. ໂປໂລປາກພາສາໃດນຳເຂົາ? (ກຈກ 22:2) ______________________________________

## ໂປໂລກ່າວຄຳພະຍານຕໍ່ປະຊາຊົນ

(ກຈກ 22:3-23)

*ໃຫ້ທ່ານອ່ານຄຳພະຍານທັງໝົດ ເປັນການສະຫລູບເລື່ອງທີ່ຮຽນມາໃນຫຼັກສູດ ໂປໂລເຫຼັ້ມທີ 1.*

**10** ກ. ປະຊາຊົນນັ້ນຕັ້ງໃຈຟັງດີ ຈົນເຖິງໂປໂລບອກວ່າ ພະເຈົ້າສັ່ງໃຫ້ໄປໄກ ໆ, ໄປຫາຄົນໃດ? (ກຈກ 22:21-22) ______________________________________________

ຂ. ຟັງເລື່ອງນັ້ນແລ້ວເຂົາກໍຮ້ອງສຽງດັງຂຶ້ນ ຈົນນາຍພັນສັ່ງໃຫ້ພາໂປໂລເຂົ້າໄປໃສ? (ກຈກ 22:24) ________________________________________________

ຄ. ສັ່ງໃຫ້ໄຕ່ສວນດ້ວຍການຫຍັງ? ______________________________________

ງ. ເປັນຫຍັງເຂົາຈຶ່ງບໍ່ຂ້ຽນໂປໂລ? (ກຈກ 22:25) ____________________________

ຈ. ໂປໂລເກີດເປັນສັນຊາດໂລມ ແຕ່ວ່ານາຍພັນນັ້ນຕ້ອງເຮັດຫຍັງເພື່ອຈະໄດ້ຮັບເປັນສັນຊາດໂລມ? (ກຈກ 22:28) ______________________________________

**11** ນາຍພັນນັ້ນສັງເກດຕົວວ່າເຮັດຜິດ ຈຶ່ງໄດ້ແກ້ຫຍັງອອກຈາກໂປໂລ? (ກຈກ 22:30) ______

## ໂປໂລຢູ່ຕໍ່ໜ້າປະໂລຫິດຕົນໃຫຍ່

(ກຈກ 23:1-10)

**12** ນາຍພັນນັ້ນຍັງຢາກຮູ້ເຫດທີ່ພວກຢິວກ່າວຫາໂປໂລ ຈຶ່ງສັ່ງໃຫ້ພວກປະໂລຫິດກັບສານສູງສຸດມາພະເຊີນໜ້າກັບໂປໂລ.

ກ. ໂປໂລເວົ້າໄດ້ໜ້ອຍໜຶ່ງ ມະຫາປະໂລຫິດສັ່ງໃຫ້ເຂົາເຮັດຫຍັງໃສ່ໂປໂລ? (ກຈກ 23:2) ____________________

ຂ. ມະຫາປະໂລຫິດນັ້ນ ຊື່ຫຍັງ? ____________________

ຄ. ໂປໂລບໍ່ຮູ້ຈັກມະຫາປະໂລຫິດ ຈຶ່ງຕອບວ່າຢ່າງໃດ? (ກຈກ 23:3) ____________________

____________________

**13** ໂປໂລຮູ້ດີວ່າສານສູງສຸດປະກອບດ້ວຍສອງພວກ ຄື ພວກຟາລິຊາຍທີ່ເຊື່ອໃນການຄືນຈາກຕາຍ ແລະອີກພວກໜຶ່ງ ທີ່ບໍ່ເຊື່ອເລື່ອງການຄືນຈາກຕາຍ.

ກ. ພວກທີ່ບໍ່ເຊື່ອຄືພວກໃດ? (ກຈກ 23:6) ____________________

ຂ. ເພື່ອຕອບແທນຕໍ່ມະຫາປະໂລຫິດ ໂປໂລກ່າວວ່າ ຕົນເອງເປັນພວກໃດ? (ກຈກ 23:6) _

ຄ. ເປັນລູກຂອງພວກໃດ? ____________________

ງ. ຖືກພິຈາລະນາພິພາກສາກໍເພາະເລື່ອງຫຍັງ? ____________________

ຈ. ໂປໂລເວົ້າຢ່າງນັ້ນແລ້ວພວກຟາລິຊາຍ ແລະພວກຊາດູກາຍເຂົາເຮັດຫຍັງກັນ? (ກຈກ 23:7)____________________

ນາຍພັນກໍຢ້ານວ່າເຂົາຈະຍາດຈັບເອົາໂປໂລຈີກຂາດເສຍ, ເພິ່ນຈຶ່ງສັ່ງໃຫ້ເອົາໂປໂລໄປໄວ້ໃນຄ້າຍອີກ.

## ໂປໂລຢູ່ຕໍ່ໜ້າອົງພະຜູ້ເປັນເຈົ້າ

(ກຈກ 23:11)

**14** ກ. ຄືນວັນນັ້ນ ແມ່ນໃຜມາຢືນຢູ່ໃກ້ໂປໂລ? (ກຈກ 23:11) ____________________

ຂ. ຊົງກ່າວວ່າ ໂປໂລໄດ້ເປັນພະຍານໃນກຸງໃດ? ____________________

ຄ. ຍັງຈະຕ້ອງເປັນພະຍານໃນກຸງໃດອີກ? ____________________

**15** ໂປໂລເຫັນຮູ້ວ່າມະຫາປະໂລຫິດອົງແທ້ຈິງ ບໍ່ແມ່ນຄົນທີ່ສັ່ງໃຫ້ຕົບປາກຢູ່ຕໍ່ໜ້າສານນັ້ນ.

ກ. ມະຫາປະໂລຫິດອົງແທ້ຕິຈິງເປັນພະບຸດຂອງພະເຈົ້າ ຄື ໃຜ? (ເຮັບເລີ 4:14) ________

ຂ. ມະຫາປະໂລຫິດນີ້ ເໝາະສົມສຳລັບພວກເຮົາ ຄື ເປັນຜູ້ ____________________ ປາດສະຈາກຜິດ ຫຼື ສິ່ງຊົ່ວມົວໝອງ. (ໃຫ້ຕື່ມຄວາມທີ່ຂາດ ຈາກ ເຮັບເລີ 7:26)

ຄ. ພະເຢຊູບໍ່ຕ້ອງການຖະຫວາຍເຄື່ອງບູຊາເພື່ອບາບຂອງຕົນເອງກ່ອນ ເໝືອນຢ່າງມະຫາປະໂລຫິດໃນໂລກນີ້ ເພາະພະອົງນັ້ນບໍ່ມີບາບ. ອີກປະການໜຶ່ງຄື ບໍ່ຕ້ອງຖະຫວາຍທຸກ ໆ ວັນເພື່ອລົບບາບເຮົາເພາະພະອົງ ຖະຫວາຍເທື່ອດຽວເປັນການສິ້ນສຸດ. ເທື່ອດຽວນັ້ນພະອົງຊົງນໍາຫຍັງມາຖະຫວາຍ? (ເຮັບເລີ 7:27)__________________________

ງ. ມະຫາປະໂລຫິດອົງນີ້ ສາມາດເຫັນຄວາມໃນໃຈຄວາມຫຍັງຂອງພວກເຮົາ? (ເຮັບເລີ 4:15) __________________________________________________

ຈ. ພະອົງນັ້ນເຫັນວ່າໂປໂລອ່ອນແອຫຼາຍ. ພະອົງໜູນໃຈໂປໂລໂດຍກ່າວວ່າ ຈົ່ງມີໃຈຢ່າງໃດ? (ກຈກ 23:11) ____________________________________________

ສ. ມະຫາປະໂລຫິດອານາເນຍນັ້ນບໍ່ໄດ້ໜູນໃຈ ແຕ່ສັ່ງໃຫ້ເຂົາຕົບຫຍັງ? (ກຈກ 23:2) __________________________________________________

ຊ. ສ່ວນພະເຢຊູນັ້ນ ພະອົງທົນທຸກທໍລະມານແລະຖືກຫຍັງ? (ເຮັບເລີ 2:18) ___________

ຍ. ພະອົງຈຶ່ງສາມາດຊ່ວຍຜູ້ທີ່ກໍາລັງຖືກຫຍັງ? (ເຮັບເລີ 2:18) ____________________

ດ. ເຖິງວ່າພະອົງບໍ່ໄດ້ຕົກໃນບາບກໍຕາມ ແຕ່ພະອົງຊົງຖືກທົດລອງເໝືອນຢ່າງໃຜ? (ເຮັບເລີ 4:15) __________________________________________________

*ຈົ່ງຮັບພິຈາລະນາ*

**16** ໃຫ້ອ່ານ ເຮັບເລີ 7:26-28. ໃນຕອນເວລານັ້ນໂປໂລພົບມະຫາປະໂລຫິດ ທີ່ເປັນມະນຸດຊື່ວ່າ ອານາເນຍ ແລ້ວຕໍ່ໄປເຫັນພະເຢຊູທີ່ເປັນມະຫາປະໂລຫິດຂອງເຮົາໃນສະຫວັນລົງມາ. ໃຫ້ເບິ່ງຮູບມະຫາປະໂລຫິດ ທັງສອງຮູບລຸ່ມນີ້.

ກ. ທີ່ມະຫາປະໂລຫິດອານາເນຍ ສັ່ງໃຫ້ເຂົາຕົບປາກຂອງໂປໂລ ສະແດງວ່າເປັນຄົນເຮັດຜິດບາບ ເໝືອນຢ່າງ ມະນຸດເຮົາທຸກຄົນ. ເລື່ອງນັ້ນເຫັນໃນຮູບເທິງ ຫຼື ຮູບລຸ່ມ? ________

ຂ. ພະເຢຊູທີ່ມາຢືນໃກ້ໂປໂລ ໃນຄືນນັ້ນເປັນອົງບໍລິສຸດ ແຕ່ຍັງເຫັນໃຈຄົນທີ່ຖືກທົດລອງຢູ່. ເລື່ອງນີ້ເຫັນໃນ ຮູບໃດ? ____________________________________________




ກິດຈະການ 23:2-3




ກິດຈະການ 23:11

ຕອບ:

**1** *ກ. ເກາະໂກດ. ຂ. ເລກ 9. ຄ. ເກາະໂລໂດ. ງ. ເລກ 8 ຈ. ປາຕາລາ. ສ. ເລກ 10.*

**2** *ກ. ເກາະກຸບໂລ. ຂ. ເລກ 15.*

**3** *ກ. ຕີໂລ. ຂ. ເລກ 11. ຄ. ເຢລູຊາເລັມ.*

**4** *ກ. ປະໂຕເລມາຍ. ຂ. ເລກ 12. ຄ. 1 ວັນ.*

**5** *ກ. ກາຍຊາເລຍ. ຂ. ເລກ 13. ຄ. ຟີລິບ. ງ. 4 ຄົນ. ຈ. ອາຄາໂບ. ສ. ເອົາສາຍຫັດແອວຂອງໂປໂລ ຊ. ກຸງເຢລູຊາເລັມ.*

**6** *ກ. ຊັບຊ່ວຍເຂົາ. ຂ. ດ້ວຍຄວາມຍິນດີ. ຄ. ຢາໂກໂບ (ແລະພວກເຖົ້າແກ່). ງ. ຕ່າງຊາດ.*

**7** *ກ. ຊໍາລະຕົວ. ຂ. ບໍລິເວນພະວິຫານ. ຄ. ກັບ 4 ຄົນ. ງ. ພວກສິດໃນເມືອງຕີໂລ ບອກວ່າພະວິນຍານບໍ່ໃຫ້ໄປ.*

**8** *ກ. ອາເຊຍ. ຂ. ໂທຟີໂມ. ຄ. ເອເຟໂຊ. ງ. ຈັບໂປໂລ. ຈ. ນາຍພັນທະຫານໂລມ. ສ. ຄ້າຍທະຫານ.*

**9** *ພາສາເຮັບເລີ.*

**10** *ກ. ຫາຄົນຕ່າງຊາດ. ຂ. ຄ້າຍທະຫານ. ຄ. ດ້ວຍການຂ້ຽນຕີ. ງ. ເພາະໂປໂລເປັນຊາດໂລມ ຈ. ຕ້ອງເສຍເງິນຫຼາຍ.*

**11** *ແກ້ໂສ້.*

**12** *ກ. ສັ່ງພວກຄົນທີ່ຢືນຢູ່ໃກ້ນັ້ນໃຫ້ຕົບປາກໂປໂລ. ຂ. ອານາເນຍ. ຄ. ວ່າ "ພະເຈົ້າຈະຊິງຕົບເຈົ້າຜູ້ເປັນຝາທີ່ທາດ້ວຍປູນຂາວ... "*

**13** *ກ. ຊາດູກາຍ. ຂ. ຟາລິຊາຍ. ຄ. ລູກຂອງຟາລິຊາຍ. ງ. ເພາະເລື່ອງຄວາມຫວັງວ່າມີການຄືນມາຈາກຕາຍ. ຈ. ເກີດການຖຽງກັນຂຶ້ນ.*

**14** *ກ. ພະຜູ້ເປັນເຈົ້າ. ຂ. ເຢລູຊາເລັມ. ຄ. ກຸງໂລມ.*

**15** *ກ. ພະເຢຊູ ຂ. ບໍລິສຸດ. ຄ. ພະອົງເອງ. ງ. ເຫັນໃຈໃນຄວາມອ່ອນແອຂອງເຮົາ. ຈ. ໃຈກ້າ. ສ. ຕົບປາກຂອງໂປໂລ. ຊ. ທົດລອງ. ຍ. ທົດລອງ. ດ. ເໝືອນຢ່າງເຮົາ.*

**16** *ກ. ຮູບເທິງ. ຂ. ຮູບລຸ່ມ.*

## ໃນການປະຊຸມບົດທີ 5

# ໂປໂລຮັກທັງຊາດຢິວແລະຄົນຕ່າງຊາດ

(ໂລມ ບົດ 9 ເຖິງ 11)

**1** ໃນມັດທາຍ 5:44. ພະເຢຊູສັ່ງວ່າ "ຈົ່ງຮັກສັດຕູຂອງທ່ານ ຈົ່ງອ້ອນວອນສຳລັບຜູ້ທີ່ຂົ່ມເຫັງທ່ານ". ໂປໂລມີສັດຕູຫຼາຍຄົນ ເປັນຕົ້ນຊາດຢິວທີ່ເປັນຊາດຂອງໂປໂລເອງ. ເຂົາຂົ່ມເຫັງໂປໂລບໍ່ມີວັນສິ້ນສຸດ.

ກ. ໃນ ກຈກ 20:3. ເຂົາຄິດຢ່າງໃດໃສ່ໂປໂລໃນເມືອງໂກລິນໂທ? ________________

ຂ. ໃນ ກຈກ 21:30-32. ຄົນຢິວໃນກຸງເຢລູຊາເລັມ ພະຍາຍາມເຮັດຫຍັງກັບໂປໂລ? _____

**2** ເປັນຫຍັງເຂົາຂົ່ມເຫັງໂປໂລເຖິງຂະໜາດນັ້ນ? (ກຈກ 22:21-22) ________________

________________________________________________________________

**3** ເຫັນວ່າເຂົາກຽດຊັງໂປໂລເຖິງຂະໜາດນັ້ນ ແຕ່ພະເຢຊູຈະໃຫ້ເຮົາຮັກສັດຕູ ແລະຜູ້ທີ່ຂົ່ມເຫັງເຮົາ. ໂປໂລຂຽນພະທຳໂລມຕອນທີ່ຍັງຢູ່ໃນເມືອງໂກລິນໂທທີ່ເຂົາວາງແຜນຈະຂ້າ ແຕ່ໂປໂລຍັງຂຽນດັ່ງຕໍ່ໄປນີ້:

| | | |
|---|---|---|
| ໃຫ້ອ່ານ | ໂລມ 1:16 | ໂລມ 2:9-10 |
| | ໂລມ 2:24 | ໂລມ 3:1 |
| | ໂລມ 3:9 | ໂລມ 3:29-30 |

ໃນທຸກຂໍ້ເຫຼົ່ານັ້ນ ໂປໂລພະຍາຍາມແກ້ບັນຫາລະຫວ່າງສອງຊາດໃດ? ______________

**4** ແຕ່ໃນ ໂລມ ບົດ 9 ເຖິງບົດ 11 ທີ່ໂປໂລເນັ້ນເລື່ອງນີ້ແທ້.
ໃຫ້ທ່ານສັງເກດຄຳແນະນຳແຕ່ລະບົດ.

ກ. ໃນ ໂລມ 9:1-3 ສະແດງຄວາມຮັກຂອງໂປໂລເພື່ອພວກໃດ? _________________

ຂ. ໃນ ໂລມ 10:1 ໂປໂລຂໍເພື່ອໃຫ້ຊາວໃດໄດ້ພົ້ນ? ___________________________

ຄ. ໃນ ໂລມ 11:1-5 ໂປໂລຖືວ່າພະເຈົ້າຍັງມີແຜນການເພື່ອພວກໃດ? _____________

**5** ໃນ ໂລມ 9 ແລະ 10 ໂປໂລອະທິບາຍວ່າ ພະເຈົ້າມີສິດທີ່ຈະກະລຸນາຕໍ່ຄົນທີ່ພະເຈົ້າເລືອກໄວ້. (ໂລມ 9:14-18) ໂປໂລຍົກຕົວຢ່າງແບບໃດໃນ ໂລມ 9:19-21? ________________

________________________________________________________________

**6** ແນ່ນອນວ່າ ສິດຂອງພະເຈົ້າຕ່າງກັນກັບສິດຂອງມະນຸດໃນ ສອງ ດ້ານ ຄື:

ພະອົງຊົງບໍລິສຸດ

ພະອົງເປັນຄວາມຮັກ

ຖ້າພະເຈົ້າມີສິດສູງສຸດແຕ່ພະອົງເປັນຄວາມຮັກແລະເປັນອົງບໍລິສຸດ. ພວກຢິວຫາວ່າ ພະຄຸນຂອງພະເຈົ້າທີ່ໂປໂລ ເທດສະໜານັ້ນ ອ່ອນໂຍນໂພດ ໃນການຮັບເອົາຄົນຕ່າງຊາດ. ໂປໂລບໍ່ໄດ້ກ່າວວ່າ ພະເຈົ້າຈະໃຊ້ສິດສູງສຸດໃນການ ໂຫດຮ້າຍ ແຕ່ມີສິດສູງສຸດໃນການສະແດງພະກະລຸນາ.

ກ. ໃນ ໂລມ 9:25-26. ໂປໂລຍົກຄວາມເວົ້າຂອງຜູ້ປະກາດພະທຳຄົນໃດ ໃນພະຄຳພີເດີມ?

____________________________________________________

ຂ. ຜູ້ປະກາດນັ້ນບອກວ່າ ພະເຈົ້າຈະເອີ້ນພວກໃດວ່າເປັນພົນລະເມືອງຂອງພະອົງ?

____________________________________________________

ຄ. ຈະເອີ້ນພວກໃດວ່າເປັນທີ່ຮັກ? __________________________________

**7** ໂປໂລເຂົ້າໃຈດີເລື່ອງລິດອຳນາດ ແລະ ສິດຂອງພະອົງທີ່ພະອົງຊົງຮັກທຸກຊາດທຸກພາສາ ດັ່ງນັ້ນຂໍຮ້ອງໃຫ້ຜູ້ປ່າວປະກາດ ຂ່າວປະເສີດໄປເຖິງທົ່ວໂລກ. (ຢ່າງທີ່ເຮົາຮຽນມາໃນອາທິດກ່ອນ) ໂປໂລເນັ້ນວ່າ ພາລະທີ່ຈະປະກາດຂ່າວປະເສີດ ຢູ່ກັບມະນຸດເຮົາ. ໃຫ້ອ່ານ ໂລມ 10:15 ອີກ.

ກ. ໂປໂລກ່າວອ້າງຈາກຜູ້ປະກາດພະທຳຄົນໃດໃນພະຄຳພີເດີມ ໃນໂລມ 10:15 ນັ້ນ? ____

ຂ. ໃນ ໂລມ 10:20. ເພິ່ນຍົກຄວາມຈາກເອຊາຢາອີກ, ຄົນທີ່ບໍ່ໄດ້ສະແຫວງຫາພະອົງແຕ່ຍັງພົບພະອົງ ຄືອ້າງເຖິງ ຊາດໃດ? ________________________________

**8** ໂປໂລເຫັນວ່າ ການປອງຮ້າຍຈາກພວກຢິວກໍຍັງມີຜົນດີປະການໜຶ່ງ ຄື ຍິ່ງເປີດໃຫ້ສະແດງ ຄວາມຮັກຂອງພະເຈົ້າ ຕໍ່ຄົນຕ່າງຊາດ. ພະທຳໂລມບອກແຈ້ງດີໃນເລື່ອງນີ້ ເປັນຕົ້ນໃນບົດທີ 11.

ກ. ໃນ ໂລມ 11:11-12. ເຫັນການລົ້ມລົງ (ພະລາດລົ້ມ) ຂອງພວກຢິວ ມີຜົນຮັບດີຢ່າງໃດມາ ເຖິງຄົນຕ່າງຊາດ? ____________________________________________

ຂ. ທ່ານອາດຈະຈື່ໄດ້ວ່າ ເມື່ອໂປໂລເຂົ້າເມືອງເອເຟໂຊເພິ່ນຕັ້ງຕົ້ນປະກາດໃນບ່ອນໃດ?

____________________________________________

ຄ. ຄົນຢິວໄລ່ເພິ່ນອອກຈາກໂຮງທຳທີ່ມີແຕ່ຄົນຢິວມາຟັງ ດັ່ງນັ້ນເພິ່ນໄປປະກາດໃນບ່ອນໃດ? (ກຈກ 19:8-10) ____________________________________________

ງ. ຈົ່ງວ່າຄົນໃດມາຟັງ? ____________________________________________

**9** ໂປໂລຍົກຄວາມປຽບທຽບເລື່ອງຕົ້ນຫຍັງ? (ໂລມ 11:17-24) __________________
ໃຫ້ແລກປ່ຽນຄວາມຄິດເຫັນໃນປະຊຸມເລື່ອງຄວາມໝາຍແຕ່ລະປະການ ຄື:

ກິ່ງຕົ້ນກອກທຳມະຊາດ
ກິ່ງຕໍ່

*ສຸດທ້າຍເຫັນວ່າ ຢູ່ໄດ້ທັງກິ່ງທຳມະຊາດ ແລະກິ່ງຕໍ່. ສຸດທ້າຍທັງຊາດຢິວ ແລະຄົນຕ່າງຊາດ ຈະຮັບຜົນດ້ວຍກັນ!*

**10** ໃຫ້ອ່ານ ໂລມ 11:25-36. ຈະເຫັນຄວາມຮັກຂອງໂປໂລຕໍ່ສັດຕູ! ເຊັ່ນດຽວກັນພວກເຮົາຈະມີ ຄວາມຮັກຕໍ່ສັດຕູໄດ້ຢ່າງໃດ. ໃຫ້ຄິດເຖິງບຸກຄົນທີ່ເຄີຍຕໍ່ຕ້ານທ່ານ ແລະຈະຮັກເຂົາ ໂດຍ ຄວາມຮັກຂອງພະເຢຊູຢ່າງໃດ? ____________________________________

____________________________________________

____________________________________________

*ເຫັນວ່າ ໂປໂລເປັນຄົນທີ່ສະຫຼາດຫຼັກແຫຼມ. ເພິ່ນເປັນຜູ້ທີ່ພະເຈົ້າຈັດໄວ້ໃຫ້ປະກາດແກ່ຄົນ ຕ່າງຊາດຢ່າງ ສະເພາະ ແຕ່ຍັງເປັນຫ່ວງພວກທີ່ຕໍ່ສູ້ເພິ່ນ ຄື ຊາດຢິວ. ຄວາມຮັກຂອງໂປໂລຕໍ່ ຊາດຢິວເຫັນໃນສອງດ້ານ ເປັນຕົ້ນ ຄື:*

- *ໃນພະທຳໂລມ ໂປໂລໂສກເສົ້າຢ່າງໜັກເລື່ອງຄົນຢິວທີ່ບໍ່ເຊື່ອ. ຖ້າເປັນໄປໄດ້ໂປໂລຈະ ຍອມຖືກ ຊົງຕັດຂາດຈາກພະຄຣິດ ເພາະເຫັນແກ່ພີ່ນ້ອງຊາວຢິວ. ເພິ່ນກໍ່ເຊື່ອວ່າວັນໜຶ່ງໃນ ອະນາຄົດທັງຊາດ ຢິວຮ່ວມກັນຈະເຊື່ອໃນພະເຢຊູ.*
- *ໂປໂລເກັບການສົງເຄາະຈາກຄຣິດສະຕະຈັກຂອງຄົນຕ່າງຊາດ ເອົາມາເຖິງເຢລູຊາເລັມ ເຖິງວ່າ ອັນຕະລາຍກໍຕາມ ແລະເຖິງວ່າໂປໂລຢາກໄປກຸງໂລມກ່ອນກໍຕາມ. ໂປໂລຮັກ ສັດຕູໄດ້ເພາະເພິ່ນເອງເຕັມໄປດ້ວຍຄວາມຮັກຂອງພະເຢຊູ ຕັ້ງແຕ່ວັນທີ່ກັບໃຈໃໝ່ໃນ ທາງໄປດາມາເຊ. ຖ້າເຮົາຈະຮັກຜູ້ອື່ນຢ່າງນັ້ນ ຕ້ອງຮູ້ຄວາມຮັກຂອງພະເຢຊູກ່ອນ.*

ໃຫ້ອ່ານຂໍ້ພະຄຳພີດັ່ງຕໍ່ໄປນີ້ ແລ້ວອ້ອນວອນຮ່ວມກັນ:

ໂລມ 5:7-10

ໂລມ 8:35-39

.. ຢ່າລືມບົດເສັງແລະການບ້ານກ່ອນປະຊຸມເທື່ອໜ້າ...

ຕອບ:

**1** *ກ. ຄິດປອງຮ້າຍ. ຂ. ພະຍາຍາມຂ້າ.*

**2** *ເພາະໂປໂລໄປຫາຄົນຕ່າງຊາດ (ພວກຢິວຊັງຄົນຕ່າງຊາດ).*

**3** *ຄົນຢິວແລະຄົນຕ່າງຊາດ.*

**4** *ກ. ພວກຢິວ. ຂ. ຊາວອິດສະລາເອັນ. ຄ. ພວກຢິວ.*

**5** *ຊ່າງປັ້ນໝໍ້ມີສິດປັ້ນໝໍ້ຕາມທີ່ເລືອກໄວ້.*

**6** *ກ. ໂອຊີຢາ (ໂຮເຊອາ).*

*ຂ. ຜູ້ທີ່ເມື່ອກ່ອນບໍ່ໄດ້ເປັນພົນລະເມືອງຂອງພະອົງ.*

*ຄ. ຜູ້ທີ່ເມື່ອກ່ອນບໍ່ໄດ້ເປັນທີ່ຮັກ.*

**7** *ກ. ຈາກເອຊາຢາ. ຂ. ຄົນຕ່າງຊາດ.*

**8** *ກ. ຄວາມພົ້ນມາເຖິງຄົນຕ່າງຊາດ. ຂ. ໃນໂຮງທຳມະເທດສະໜາຢິວ.*

*ຄ. ຫ້ອງປະຊຸມຂອງທ່ານຕີລາໂນ.*

*ງ. ຄົນທັງຫຼາຍທີ່ຢູ່ໃນແຂວງອາເຊຍທັງພວກຢິວ ແລະພວກກຼີກ.*

**9** *ຕົ້ນກອກ.*

**10** *(ໃຫ້ແລກປ່ຽນຄຳຕອບກັບໝູ່ໃນປະຊຸມ).*